

# ຄອບຄົວ ແລະ Child Outcome Summary (ບົດສະຫຼຸບຜົນໄດ້ຮັບຂອງເດັກ)

## ມັນເຮັດວຽກຄືແນວໃດ?

### ຂະບວນການ Child Outcome Summary (ບົດສະຫຼຸບຜົນໄດ້ຮັບຂອງເດັກ)

ຂະບວນການຂອງ Child Outcome Summary (ບົດສະຫຼຸບຜົນໄດ້ຮັບຂອງເດັກ, COS) ຖືກນຳມາໃຊ້ເພື່ອເກັບກຳຂໍ້ມູນກ່ຽວກັບຄວາມຄືບໜ້າທີ່ເດັກເຮັດໄດ້ໃນການຊ່ວຍເຫຼືອເບື້ອງຕົ້ນ. ຂໍ້ມູນສະຫຼຸບກ່ຽວກັບຜົນໄດ້ຮັບທັງສາມປະການຈະຖືກສັງລວມໃນເວລາທີ່ລູກຂອງທ່ານເຂົ້າ ແລະ ອອກຈາກບໍລິການຊ່ວຍເຫຼືອເບື້ອງຕົ້ນ.

## ສາມດ້ານທີ່ສຳຄັນ ແມ່ນມີຫຍັງແດ່?

### ຕິດຕາມຜົນໄດ້ຮັບ

- ທັກສະທາງດ້ານສັງຄົມ-ອາລົມໃນທາງບວກ ແລະ ການພົວພັນທາງສັງຄົມ
- ການໄດ້ມາ ແລະ ການນຳໃຊ້ຄວາມຮູ້ ແລະ ທັກສະຕ່າງໆ
- ການນຳໃຊ້ພຶດຕິກຳທີ່ເໝາະສົມເພື່ອໃຫ້ບັນລຸໄດ້ຕາມຄວາມຕ້ອງການຂອງພວກເຂົາ.

## ຜູ້ຕັດສິນໃຈກ່ຽວກັບຄວາມຄືບໜ້າແມ່ນໃຜ?

### ຄຸນຄ່າຂອງພໍ່ແມ່ ແລະ ຜູ້ດູແລ

ບໍລິການຊ່ວຍເຫຼືອເບື້ອງຕົ້ນຄຳນຶງວ່າ ພໍ່ແມ່ ແລະ ຜູ້ດູແລແມ່ນຄູຫຼັກຂອງເດັກນ້ອຍ. ພວກເຮົາສະໜັບສະໜູນໃຫ້ພໍ່ແມ່ມີສ່ວນຮ່ວມສະເໝີ. ພໍ່ແມ່ຮູ້ຈັກລູກຂອງພວກເຂົາດີທີ່ສຸດ. ພວກເຮົາຕ້ອງການຂໍ້ມູນຂອງພວກເຂົາ.

## ຂໍ້ມູນທີ່ສະຫຼຸບຈະຖືກນຳມາໃຊ້ຄືແນວໃດ?

### ການວັດແທກຄຸນນະພາບຂອງບໍລິການຊ່ວຍເຫຼືອເບື້ອງຕົ້ນ

ຂໍ້ມູນທີ່ສະຫຼຸບ ແຈ້ງໃນໂປຣແກມ ແລະ ໃນພື້ນທີ່ຂອງທ່ານໃຫ້ກັບທີມງານ Early Support for Infants and Toddlers (ຊ່ວຍເຫຼືອເດັກເກີດໃໝ່ ແລະ ເດັກໄວຮຽນຍ່າງ, ESIT) ຂອງລັດຮັບຊາບວ່າ ບໍລິການຊ່ວຍເຫຼືອເບື້ອງຕົ້ນສ້າງຄວາມແຕກຕ່າງໃຫ້ກັບເດັກເກີດໃໝ່, ເດັກໄວຮຽນຍ່າງ ແລະ ຄອບຄົວໄດ້ຄືແນວໃດ; ການສະໜັບສະໜູນ ESIT ດ້ວຍການປັບປຸງບໍລິການ; ແລະ ການໃຫ້ຂໍ້ມູນສຳລັບ Annual Performance Report (ການລາຍງານການປະຕິບັດງານປະຈຳປີ, APR) ຂອງລັດ. APR ແມ່ນເປີດເຜີຍຕໍ່ສາທາລະນະ.

## ຂໍ້ມູນຂອງລູກຂອງຂ້າພະເຈົ້າໄດ້ຮັບການຄຸ້ມຄອງ ຫຼືບໍ່?

### ຄວາມເປັນສ່ວນຕົວຂອງຂໍ້ມູນເປັນສິ່ງສຳຄັນ

ແມ່ນແລ້ວ, ຂໍ້ມູນຂອງລູກຂອງທ່ານໄດ້ຮັບການຄຸ້ມຄອງ. ຈະລາຍງານສະເພາະຂໍ້ມູນສະຫຼຸບເທົ່ານັ້ນ. ຊື່ຂອງທ່ານ ແລະ ຊື່ຂອງລູກຂອງທ່ານຈະບໍ່ຖືກຄັດຕິດມາກັບຂໍ້ມູນສະຫຼຸບທີ່ລາຍງານ. ພວກເຮົາໃຊ້ຂໍ້ມູນເຫຼົ່ານີ້ເພື່ອສະແດງໃຫ້ເຫັນວ່າ ບໍລິການຊ່ວຍເຫຼືອເບື້ອງຕົ້ນເຮັດວຽກໄດ້ດີເທົ່າໃດ.

Washington State Department of
CHILDREN, YOUTH & FAMILIES

*ຖ້າວ່າເຈົ້າຕ້ອງການສຳເນົາສິ່ງພິມນີ້ ໂດຍບໍ່ເສຍຄ່າໃຊ້ຈ່າຍ ຫຼື ໃນຮູບແບບພາສາອື່ນ, ກະລຸນາຕິດຕໍ່ຝ່າຍປະຊາສຳພັນທີ່ ເບີ 1-800-723-4831 ຫຼື ອີເມວ communications@dcyf.wa.gov.*

DCYF PUBLICATION FS_0025 LA (03-2025) Lao